ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
***************************

ສານປະຊາຊົນສູງສຸດ

ເລກທີ 146/ສປສສ
ນະຄອນຫລວງວຽງຈັນ, ວັນທີ 24/8/2010

# ຄຳແນະນຳ
## ຂອງທ່ານປະທານສານປະຊາຊົນສູງສຸດ

ເຖິງ: ທ່ານບັນດາທ່ານປະທານສານປະຊາຊົນທ້ອງຖິ່ນ
ເລື່ອງ: ສິດອຳນາດຂອງສານປະຊາຊົນເຂດ ໃນການພິຈາລະນາຕັດສິນຄະດີອາຍາ

ອີງຕາມ ມາດຕາ 27 ຂໍ້ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບເລກທີ 09/ສພຊ ລົງວັນທີ 26 ພະຈິກ 2009;
ອີງຕາມ ການຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 28 ພຶດສະພາ 2010;

ສານປະຊາຊົນເຂດ ໄດ້ຮັບການສ້າງຕັ້ງ ຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 113/ຄປຈ ລົງວັນທີ 28 ພຶດສະພາ 2009 ແລະ ຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບເລກທີ 09 /ສພຊ ລົງວັນທີ 26 ພະຈິກ 2009, ຜ່ານການເຄື່ອນໄຫວວຽກງານຂອງສານປະຊາຊົນເຂດ ໃນໄລຍະຜ່ານມໄດ້ປະສິບຜົນສຳເລັດໃນຫລາຍດ້ານ ແຕ່ກໍຍັງມີບາງບັນຫາທີ່ຍັງບໍ່ທັນເຂົ້າໃຈ ແລະ ປະຕິບັດຢ່າງເປັນເອກະພາບກັນ ເປັນຕົ້ນແມ່ນ ສິດອຳນາດຂອງສານປະຊາຊົນເຂດ ໃນການພິຈາລະນາຕັດສິນຄະດີອາຍາ ທີ່ກຳນົດໄວ້ໃນມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 113/ຄປຈ ລົງວັນທີ 28 ພຶດສະພາ 2009 ແລະ ມາດຕາ 27 ຂໍ້ 2 ທີ່ກຳນົດໃຫ້ສານປະຊາຊົນເຂດມີສິດ ແລະ ໜ້າທີ່ໃນການຕັດສິນຄະດີອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນ 3 ປີນັ້ນ.

ສະນັ້ນ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ; ປະທານສານປະຊາຊົນສູງສຸດ ຈຶ່ງອອກຄຳແນະນຳ:

1. ໃຫ້ຄະນະສານອາຍາ ຂອງສານປະຊາຊົນເຂດ ມີສິດອຳນາດພິຈາລະນາຕັດສິນຄະດີອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນ 03 ປີ ເຊັ່ນ 03 ເດືອນ ຫາ



ເວາງ ທະວີສັກ.doc

02 ປີ, 01 ປີ ຫາ 03 ປີ ແລະ ອື່ນໆ ສ່ວນມາດຕາ ຫລື ວັກໃດກຳນົດໂທດສູງເກີນກວ່າ 03 ປີ ເຊັ່ນ: 01 ປີ ຫາ 05 ປີ, 02 ປີ ຫາ 05 ປີ ຫລື ອື່ນໆ ນັ້ນ ສານປະຊາຊົນເຂດບໍ່ມີສິດອຳນາດໃນການພິຈາລະນາຕັດສິນ, ຕ້ອງສົ່ງຄະດີດັ່ງກ່າວໃຫ້ສານປະຊາຊົນແຂວງ, ນະຄອນ ເປັນຜູ້ພິຈາລະນາຕັດສິນ ຕາມຂັ້ນຕອນຂອງກົດໝາຍ.

2. ໃນກໍລະນີທີ່ໄອຍະການປະຊາຊົນ ສັ່ງຟ້ອງຄະດີອາຍາທີ່ມາດຕາ ຫລື ວັກດັ່ງກ່າວກຳນົດໂທດຕັດອິດສະຫລະພາບເກີນ 03 ປີ ມາຫາສານປະຊາຊົນເຂດ ແມ່ນໃຫ້ສານປະຊາຊົນເຂດປະສານສົມທົບກັບອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ແລ້ວສົ່ງສຳນວນຄະດີຄືນ ເພື່ອສະເໜີໃຫ້ສັ່ງຟ້ອງຕໍ່ສານປະຊາຊົນແຂວງ, ນະຄອນ ທີ່ມີສິດອຳນາດໃນການພິຈາລະນາ.

ດັ່ງນັ້ນ ຈຶ່ງແນະນຳມາຍັງທ່ານ ເພື່ອມີຄວາມເຂົ້າໃຈເປັນເອກະພາບ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມທີ່ກຳນົດໄວ້ໃນກົດໝາຍ.

ໃນພາກປະຕິບັດຕົວຈິງ ຖ້າເຫັນວ່າມີຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານຫາສານປະຊາຊົນສູງສຸດ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ,

ຄຳມີ ໄຊຍະວົງ

ບ່ອນສົ່ງ:
- ກຳມາທິການກົດໝາຍ ສະພາແຫ່ງຊາດ ... ເພື່ອລາຍງານ
- ອົງການໄອຍະການປະຊາຊົນສູງສຸດ...ເພື່ອກວດກາ
- ສຳເນົາໄວ້ ... 02 ສະບັບ